ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 09161 /ກພສ

ນະຄອນຫລວງວຽງຈັນ, ວັນທີ 01 ສິງຫາ 2024

# ສະໂນດນຳສົ່ງ

ເຖິງ: - ຫົວໜ້າພະແນກການກົມພາສີ;

- ຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງວຽງຈັນ;

ເລື່ອງ: ນຳສົ່ງເອກະສານ.

| ລຳດັບ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ຂໍ້ຕົກລົງ ວ່າດ້ວຍການຢຸດຕິ ການຈັດເກັບພັນທະຂອງ ບໍລິສັດທ່າບົກໃນການບໍລິການຕູ້ສິນຄ້າ ຜ່ານທາງລົດໄຟ. ສະບັບເລກທີ 2740/ກງ, ລົງວັນທີ 30 ກໍລະກົດ 2024<br><br>( ພ້ອມເອກະສານຄັດຕິດ ) | 01 ສະບັບ | ເພື່ອຊາບ ແລະ ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ |
| | ລວມ | 01 ສະບັບ | |

ຫົວໜ້າກົມ

ພູເຂົາຄຳ ວັນນະວົງໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ...2740../ກງ

ນະຄອນຫຼວງວຽງຈັນ, ວັນທີ..30 ກໍລະກົດ 2024

# ຂໍ້ຕົກລົງ
## ວ່າດ້ວຍການຢຸດຕິການຈັດເກັບພັນທະຂອງບໍລິສັດທ່າບົກໃນການບໍລິການຕູ້ສິນຄ້າ ຜ່ານທາງລົດໄຟ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1232/ຫສນຍ, ລົງວັນທີ 26 ມິຖຸນາ 2024.

**ລັດຖະມົນຕີ ກະຊວງການເງິນ ອອກຂໍ້ຕົກລົງ:**

**ມາດຕາ 1** ໃຫ້ຢຸດຕິການຈັດຕັ້ງປະຕິບັດການມອບພັນທະຂອງບໍລິສັດທ່າບົກ ໃນການບໍລິການຕູ້ສິນຄ້າ (Cargo Containers) ຜ່ານທາງລົດໄຟ ຕາມຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 6096/ກງ, ລົງວັນທີ 09 ທັນວາ 2021.

**ມາດຕາ 2** ມອບໃຫ້ກົມພາສີ ສົມທົບພາກສ່ວນກ່ຽວຂ້ອງ ແລະ ນຳພາລັດຖະການພາສີແຕ່ລະຂັ້ນ ພ້ອມກັບຈັດຕັ້ງປະຕິບັດຂໍ້ຕົກລົງນີ້ຢ່າງເຂັ້ມງວດ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ສິງຫາ 2024 ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງການເງິນ
ລັດຖະມົນຕີ

ສັນຕິພາບ ພົມວິຫານ